ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ແຂວງອັດຕະປື

ເລກທີ...05.../ຈຂອປ

ອັດຕະປື, ວັນທີ...12 ມີ.ນ 2020...

# ຄຳສັ່ງ

ເຖິງ: - ທ່ານເຈົ້າເມືອງ 05 ຕົວເມືອງ.

- ທ່ານຫົວໜ້າພະແນກການອ້ອມຂ້າງແຂວງ, ອົງການທຽບເທົ່າແຂວງຂັ້ນແຂວງ.
- ອຳນວຍການບໍລິສັດ, ຫ້າງຮ້ານຕ່າງໆ, ຜູ້ປະກອບການທຸລະກິດ ທັງພາກລັດ ແລະ ເອກະຊົນ, ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າໃນທົ່ວແຂວງອັດຕະປື.

**ເລື່ອງ: ການປ້ອງກັນ, ຄວບຄຸມ, ຕອບໂຕ້ ພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ ( COVID-19 ).**

- ອີງຕາມ: ກົດໝາຍປົກຄອງທ້ອງຖິ່ນແຫ່ງ ສປປລາວ ສະບັບເລກທີ 68/ສພຊ ລົງວັນທີ 14 ທັນວາ 2015 ໝວດທີIV ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ: ໜັງສືແຈ້ງການຂອງຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ສະບັບເລກທີ 01,02,03,04,05/ສພກ ນະຄອນຫຼວງວຽງຈັນ ລົງວັນທີ 02 ມີນາ 2020.
- ອີງຕາມ: ການຕົກລົງເຫັນດີເປັນເອກະພາບຂອງກອງປະຊຸມຄະນະນຳຂັ້ນແຂວງ ໃນຄັ້ງວັນທີ 09 ມີນາ 2020 ທີ່ຫ້ອງປະຊຸມຊັ້ນ 5 ຫ້ອງວ່າການແຂວງ.

ປະຈຸບັນ ສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ໃນຫຼາຍປະເທດໄດ້ຂະຫຍາຍເປັນວົງກວ້າງ ສືບຕໍ່ມີກໍລະນີຕິດເຊື້ອ ແລະ ເສຍຊີວິດເພີ່ມຂຶ້ນໃນແຕ່ລະວັນ, ອົງການອະນາໄມໂລກໄດ້ປະເມີນວ່າ ພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ແມ່ນມີຄວາມສ່ຽງສູງທີ່ສຸດທີ່ຈະແຜ່ລະບາດໄປທົ່ວໂລກ, ການເດີນທາງໄປປະເທດທີ່ມີການລະບາດ ແມ່ນມີຄວາມສ່ຽງສູງໃນການຕິດເຊື້ອ ແລະ ນຳມາແຜ່ລະບາດໃນປະເທດຂອງເຮົາ ຍ້ອນວ່າປະຈຸບັນນີ້ ສປປລາວ ຍັງບໍ່ມີກໍລະນີຜູ້ຕິດເຊື້ອ ເວົ້າລວມ, ເວົ້າສະເພາະຢູ່ແຂວງອັດຕະປື ກໍ່ຍັງບໍ່ທັນມີເທື່ອ ແຕ່ເພື່ອເປັນການປ້ອງກັນ, ຄວບຄຸມ ແລະ ຕອບໂຕ້ ຕໍ່ພະຍາດດັ່ງກ່າວ ເຈົ້າແຂວງອັດຕະປື ຈຶ່ງອອກຄຳສັ່ງດັ່ງນີ້:

1. ໃຫ້ເລື່ອນການຈັດທົວໄປທ່ອງທ່ຽວຕ່າງປະເທດຕ່າງໆ ທີ່ມີການລະບາດໃນໄລຍະນີ້ ຈົນກວ່າສະພາບການລະບາດຂອງພະຍາດສາມາດຄວບຄຸມໄດ້.
2. ໃຫ້ເລື່ອນການຮັບທົວຈາກຕ່າງປະເທດຕ່າງໆ ທີ່ມີການລະບາດມາທ່ຽວລາວໃນໄລຍະນີ້ ຈົນກວ່າສະພາບການລະບາດຂອງພະຍາດສາມາດຄວບຄຸມໄດ້.
3. ໃຫ້ການຮ່ວມມືກັບເຈົ້າໜ້າທີ່ ທີ່ປະຕິບັດການຄວບຄຸມວັດແທກອຸນຫະພູມຮ່າງກາຍ ແລະ ຂັ້ນຕອນຕ່າງໆ ຢູ່ດ່ານຂາເຂົ້າກວດຄົນເຂົ້າເມືອງ ທັງຢູ່ດ່ານສາກົນພູເກືອ ແລະ ດ່ານອື່ນໆ.

4. ສຳຫຼັບບຸກຄົນທີ່ກວດ ບໍ່ມີອາການໄຂ້ ແລະ ອາການອື່ນໆ ທີ່ກ່ຽວຂ້ອງກັບພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ແມ່ນໃຫ້ຕິດຕາມຕົນເອງ ກ່ຽວກັບອາການຂອງພະຍາດ COVID-19 ກັກບໍລິເວນພາຍໃນໄລຍະ 14 ວັນ.
5. ສຳລັບບຸກຄົນທີ່ຖືກກັ່ນກອງວ່າມີອາການໄຂ້ ແລະ ເຂົ້າກັບນິຍາມພະຍາດ COVID-19 ແມ່ນຈະໄດ້ນຳສົ່ງເຂົ້າໂຮງໝໍເພື່ອຕິດຕາມ ແລະ ກວດຊອກຫາເຊື້ອຈຸລະໂລກໂຄໂລນາສາຍພັນໃໝ່.
6. ການອະນຸມັດໃຫ້ພະນັກງານ, ເດີນທາງໄປປະຕິບັດງານຢູ່ໃນບັນດາປະເທດທີ່ມີການລະບາດຂອງພະຍາດ COVID-19 ຖ້າມີຄວາມຈຳເປັນແທ້ໆ ກໍ່ຕ້ອງປະຕິບັດຕາມມາດຕະການເຝົ້າລະວັງ ກັນການຕິດເຊື້ອຕາມການແນະນຳຂອງປະເທດເຈົ້າພາບຢ່າງເຂັ້ມງວດ ໂດຍສະເພາະການປ້ອງກັນຕົນເອງບໍ່ໃຫ້ຕິດເຊື້ອ ( ກໍລະນີພະນັກງານທີ່ໄດ້ໄປເຄື່ອນໄຫວວຽກງານ ກັບມາຈາກບັນດາປະເທດທີ່ມີການລະບາດຂອງພະຍາດ COVID-19 ແມ່ນໃຫ້ປະຕິບັດຕາມຄຳແນະນຳຂອງກະຊວງສາທາລະນະສຸກ ກໍ່ຄືຂອງພະແນກສາທາລະນະສຸກແຂວງ ຢ່າງເຂັ້ມງວດ ).
7. ສຳຫຼັບນັກສຶກສາ ທີ່ໄປສຶກສາຢູ່ປະເທດທີ່ມີຄວາມສ່ຽງ ຊ້ວງໄລຍະນີ້ ແມ່ນໃຫ້ຕິດຕາມແຈ້ງການຈາກພະແນກສຶກສາທິການ ແລະ ກິລາແຂວງ ( ແຂວງອັດຕະປື ແລະ ແຂວງທີ່ຜູ້ກ່ຽວໄດ້ໄປສຶກສາ ໃນປະເທດນັ້ນ ).
8. ໃຫ້ໂຈະ ຫຼື ເລື່ອນ ຫຼື ຈຳກັດຜູ້ເຂົ້າຮ່ວມ ການຈັດງານປະເພນີ, ງານສ້າງສັນ ແລະ ກິດຈະກຳອື່ນໆ ທີ່ມີຈຳນວນຄົນເຂົ້າຮ່ວມຫຼາຍ ລວມທັງການຈັດການແຂ່ງຂັນກິລາຕ່າງໆອອກໄປ ຈົນກວ່າສະພາບການລະບາດຂອງພະຍາດ COVID-19 ສາມາດຄວບຄຸມໄດ້ ( ຖ້າກໍລະນີຈຳເປັນຕ້ອງເຮັດ ແມ່ນໃຫ້ຄະນະຮັບຜິດຊອບ ຫຼື ເຈົ້າພາບປະຕິບັດມາດຕະການ ປ້ອງກັນການຕິດເຊື້ອເຊັ່ນ: ສະແກນອຸນຫະພູມ ຖ້າພົບເຫັນຜູ້ໃດມີອາການໄຂ້, ໄອ ຫຼື ຫາຍໃຈຍາກ ທີ່ເຂົ້າກັບນິຍາມຂອງພະຍາດ COVID-19 ແມ່ນບໍ່ອະນຸຍາດໃຫ້ເຂົ້າຮ່ວມງານຢ່າງເດັດຂາດ ).
9. ສະເໜີໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງປະສານງານ ແລະ ຕິດຕາມການຈັດຕັ້ງປະຕິບັດຢ່າງເຂັ້ມງວດ.
10. ສຳຫຼັບ ນິຍາມຂອງພະຍາດ COVID-19 ແລະ ມາດຕະການໃນການປ້ອງກັນ, ຄວບຄຸມ, ຕອບໂຕ້ແມ່ນໄດ້ຕິດຄັດດ້ານຫຼັງ ແລະ ພະແນກສາທາລະນະສຸກແຂວງໄດ້ລົງແຈກຢາຍໃຫ້ຈຸດສຳຄັນຕ່າງໆ.
11. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

ແຂວງອັດຕະປື

ເຈົ້າແຂວງແຂວງອັດຕະປື

ເລັດ ໄຊຍະພອນ

ບ່ອນນຳສົ່ງ:
-ເຈົ້າເມືອງ 05 ຕົວເມືອງ ບ່ອນລະ 01 ສະບັບ
-ພະແນກການອ້ອມຂ້າງ,ອົງການທຽບເທົ່າຂັ້ນແຂວງ ບ່ອນລະ 01 ສະບັບ.
-ບໍລິສັດຕ່າງໆ ບ່ອນລະ 01 ສະບັບ.
-ພາກສ່ວນທີ່ກ່ຽວຂ້ອງ ບ່ອນລະ 01 ສະບັບ.
-ເກັບມ້ຽນ 01 ສະບັບ.